ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ | ເລກທີ 072 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 16.03.2009

# ດຳລັດ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການ ແມ່ນ້ຳຂອງ ແຫ່ງຊາດລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
- ອີງຕາມ ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ, ສະບັບເລກທີ 20-96 ລົງວັນທີ 11 ຕຸລາ 1996.
- ອີງຕາມ ສັນຍາວ່າດ້ວຍການຮ່ວມມື ພັດທະນາອ່າງແມ່ນ້ຳຂອງແບບຍືນຍົງ, ສະບັບລົງວັນທີ 5 ເມສາ 1995.
- ອີງຕາມ ການສະເໜີຂອງຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ສະບັບເລກທີ 29/ທປກ. ລົງວັນທີ 10 ມີນາ 2009.

### ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ I

### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວ ແນໃສ່ເຮັດໃຫ້ ການເຄື່ອນໄຫວວຽກງານ ມີຄວາມຄ່ອງຕົວ ແລະ ມີປະສິດທິຜົນສູງ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວ (ຂຽນຫຍໍ້ວ່າ ຄມຊ) ແມ່ນການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ ແລະ ມີພາລະບົດບາດ ເປັນອົງການບໍລິຫານຊັບພະຍາກອນນ້ຳແຫ່ງຊາດ ທັງເປັນເສນາທິການໃຫ້ລັດຖະບານແຫ່ງ ສປປ ລາວ ໃນການຄຸ້ມຄອງ, ພັດທະນາ, ອະນຸລັກ, ຟື້ນຟູ ແລະ ນຳໃຊ້ຊັບພະຍາກອນນ້ຳ (ຕໍ່ໄປເອີ້ນວ່າການຄຸ້ມຄອງຊັບພະຍາກອນນ້ຳ) ໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ຄມຊ ມີໜ້າທີ່ດັ່ງນີ້ :

3.1 ໃຫ້ຄຳປຶກສາ, ປະກອບຄຳເຫັນ ຕໍ່ລັດຖະບານ ກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳ ແລະ ບັນຫາກ່ຽວກັບຊັບພະຍາກອນນ້ຳ ຈາກບັນດາໂຄງການພັດທະນາທີ່ມີຜົນກະທົບຢ່າງຫຼວງຫຼາຍຕໍ່ທັງພາຍໃນ ແລະ ປະເທດໃກ້ຄຽງ ເພື່ອນຳສະເໜີ ຕໍ່ລັດຖະບານພິຈາລະນາ;

3.2 ພິຈາລະນາຮ່າງນະໂຍບາຍ, ຍຸດທະສາດ, ນິຕິກຳ ແລະ ແຜນດຳເນີນງານ ກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳ ເພື່ອນຳສະເໜີ ລັດຖະບານຕົກລົງອະນຸມັດ;

3.3 ພິຈາລະນາຮ່າງ ແຜນພັດທະນາອ່າງແມ່ນ້ຳຕ່າງໆ ເພື່ອນຳສະເໜີ ຕໍ່ລັດຖະບານຕົກລົງ ອະນຸມັດ;

3.4 ປະກອບຄຳເຫັນໃຫ້ລັດຖະບານ ກ່ຽວກັບບົດສຶກສາຜົນກະທົບແບບສະສົມ ແລະ ຂ້າມຜ່ານຊາຍແດນ ຂອງໂຄງການລົງທຶນ ທີ່ມີຜົນກະທົບຢ່າງຫຼວງຫຼາຍ ທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ລວມທັງບັນດາໂຄງການຢູ່ຕາມລຳແມ່ນ້ຳຂອງ;

3.5 ພິຈາລະນາ ຂໍ້ຂັດແຍ່ງ ກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ ຊັບພະຍາກອນນ້ຳ ໃນລະດັບພາກພື້ນ, ລະດັບຊາດ ແລະ ລະດັບທ້ອງຖິ່ນ ເພື່ອນຳສະເໜີ ວິທີການແກ້ໄຂ;

3.6 ປະສານງານ ແລະ ພົວພັນຮ່ວມມືກັບຂະແໜງການ ແລະ ທ້ອງຖິ່ນຕ່າງໆ ຢູ່ພາຍໃນປະເທດ, ຄະນະກຳມະການແມ່ນ້ຳຂອງແຫ່ງຊາດ ຂອງບັນດາປະເທດພາຄີ, ຄມສ, ບັນດາປະເທດຕ່າງໆ, ບັນດາອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງອື່ນໆ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການຮ່ວມມື ພັດທະນາແບບຍືນຍົງ ໃນອ່າງແມ່ນ້ຳຂອງປີ 1995; ຕິດຕາມກວດກາ ແລະ ປະເມີນຜົນກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳ ພາຍໃນອ່າງແມ່ນ້ຳຂອງ; ສ້າງ, ເຜີຍແຜ່ ແລະ ຕິດຕາມກວດກາການນຳໃຊ້ລະບຽບການ ແລະ ບົດແນະນຳດັ່ງກ່າວ;

3.7 ເຂົ້າຮ່ວມ ແລະ ຈັດກອງປະຊຸມໃນລະດັບຕ່າງໆ ຂອງ ຄມສ, ກອງປະຊຸມຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດຕາມການມອບໝາຍ ຂອງລັດຖະບານ ແລະ ລາຍງານຜົນໄດ້ຮັບເປັນປົກກະຕິ;

3.8 ພິຈາລະນາສະເໜີແຕ່ງຕັ້ງບຸກຄະລາກອນ ເພື່ອເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ, ພົບປະເຈລະຈາ, ເຊັນສັນຍາລະດັບຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດໃນຂອບເຂດວຽກງານ ຄມສ ແລະ ຄມຊ;

3.9 ພິຈາລະນາ ສະເໜີ ແຕ່ງຕັ້ງບຸກຄະລາກອນ ເພື່ອໄປປະຈໍາການຢູ່ກອງເລຂາ ຄມສ;

3.10 ໂຄສະນາເຜີຍແຜ່, ຈັດພິມບັນດາຂໍ້ມູນ ແລະ ບົດຮຽນທີ່ກ່ຽວກັບວຽກງານຂອງ ຄມຊ ແລະ ຄມສ;

3.11 ຮັບຮອງ ແລະ ຈັດຕັ້ງປະຕິບັດແຜນການ ແລະ ແຜນງົບປະມານໃນແຕ່ລະໄລຍະ ຂອງ ຄມຊ ລວມທັງແຜນການ ທີ່ນອນຢູ່ໃນຂອບເຂດການຮ່ວມມືກັບ ຄມສ ແລະ ສະຫຼຸບລາຍງານຢ່າງເປັນປົກກະຕິ;

3.12 ເຂົ້າຮ່ວມການພົບປະເຈລະຈາ ແລະ ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຕາມການມອບໝາຍຂອງລັດຖະບານ; ຍາດແຍ່ງການຊ່ວຍເຫຼືອ ແລະ ຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງອື່ນໆ ກ່ຽວກັບວຽກງານການຄຸ້ມຄອງຊັບພະຍາກອນນໍ້າແບບຍືນຍົງ;

3.13 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງລັດຖະບານ.

**ມາດຕາ 4. ຂອບເຂດສິດ**

ຄມຊ ມີຂອບເຂດສິດ ດັ່ງນີ້ :

4.1 ດໍາເນີນກອງປະຊຸມສະໄໝສາມັນຢ່າງເປັນປົກກະຕິ ແລະ ຮຽກໂຮມກອງປະຊຸມສະໄໝວິສາມັນ ຖ້າເຫັນວ່າມີຄວາມຈໍາເປັນ;

4.2 ເຊີນຜູ້ຕາງໜ້າຂອງຂະແໜງການ, ທ້ອງຖິ່ນທີ່ກ່ຽວຂ້ອງ, ຊ່ຽວຊານ, ທີ່ປຶກສາ/ຜູ້ຕາງໜ້າ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງເຂົ້າຮ່ວມກອງປະຊຸມຂອງ ຄມຊ ຖ້າເຫັນວ່າມີຄວາມຈໍາເປັນ;

4.3 ແຕ່ງຕັ້ງຄະນະຜູ້ຊ່ວຍວຽກ, ສ້າງຕັ້ງໜ່ວຍປະຕິບັດງານສະເພາະກິດຂຶ້ນ ຊຶ່ງປະກອບດ້ວຍບັນດາຜູ້ຕາງໜ້າຈາກຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສຶກສາຄົ້ນຄວ້າບັນຫາສະເພາະໃດໜຶ່ງ;

4.4 ສະເໜີປັບປຸງໂຄງປະກອບການຈັດຕັ້ງ ຂອງ ຄມຊ ແລະ ກົງຈັກຊ່ວຍວຽກ ຂອງ ຄມຊ ຖ້າເຫັນວ່າມີຄວາມຈໍາເປັນ;

4.5 ປະຕິບັດສິດອື່ນໆ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

ຄະນະກໍາມະການແມ່ນໍ້າຂອງແຫ່ງຊາດລາວ ເປັນການຈັດຕັ້ງທີ່ບໍ່ປະຈໍາການ, ມີກອງເລຂາຊ່ວຍວຽກປະຈໍາວັນ ໂດຍຖືເອົາກົມຊັບພະຍາກອນນໍ້າເປັນກອງເລຂາ ຂອງຄະນະກໍາມະການດັ່ງກ່າວ;

ຄະນະກໍາມະການອ່າງແມ່ນໍ້າສາຂາມອບໃຫ້ ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ, ຫົວໜ້າອົງການນໍ້າ ແລະ ສິ່ງແວດລ້ອມ, ປະທານຄະນະກໍາມະການແມ່ນໍ້າຂອງແຫ່ງຊາດລາວ ອອກຂໍ້ຕົກລົງກໍານົດລະອຽດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່ ແລະ

ໂຄງປະກອບການຈັດຕັ້ງ ຂອງຄະນະຄະນະກຳມະການອ່າງແມ່ນ້ຳສາຂາ ພ້ອມທັງແຕ່ງຕັ້ງບຸກຄະລາກອນເຂົ້າໃນຄະນະດັ່ງກ່າວ.

**ມາດຕາ 6. ໂຄງປະກອບ ບຸກຄະລາກອນ**

6.1 ຄະນະກຳມະການ ແມ່ນ້ຳຂອງ ແຫ່ງຊາດລາວ ປະກອບດ້ວຍ:

1) ຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການສິ່ງແວດລ້ອມແຫ່ງຊາດ ປະທານກິຕິມະສັກ, ຜູ້ຊີ້ນຳ ຄມຊ
2) ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ; ປະທານ
3) ລັດຖະມົນຕີ ຊ່ວຍວ່າການ ກະຊວງພະລັງງານ ແລະ ບໍ່ແຮ່ ຮອງປະທານ
4) ຮອງຫົວໜ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຮອງປະທານ;
5) ລັດຖະມົນຕີຊ່ວຍວ່າການກະຊວງແຜນການ ແລະ ການລົງທຶນ ຮອງປະທານ
6) ລັດຖະມົນຕີ ຊ່ວຍວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ຮອງປະທານ
7) ລັດຖະມົນຕີ ຊ່ວຍວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຮອງປະທານ
8) ຫົວໜ້າ ກົມແຜນການ - ກະຊວງ ແຜນການ ແລະ ການລົງທຶນ ກຳມະການ
9) ຫົວໜ້າ ກົມໄຟຟ້າ - ກະຊວງພະລັງງານ ແລະ ບໍ່ແຮ່ ກຳມະການ
10) ຫົວໜ້າ ກົມແຜນການ - ກະຊວງກະສິກຳ ແລະ ປ່າໄມ້ ກຳມະການ
11) ຫົວໜ້າ ກົມໂຍທາທິການທາງນ້ຳ - ກະຊວງໂຍທາທິການ ແລະ ຂົນສົ່ງ ກຳມະການ
12) ຫົວໜ້າ ກົມຈັດຕັ້ງສາກົນ - ກະຊວງການຕ່າງປະເທດ ກຳມະການ
13) ຫົວໜ້າ ຫ້ອງການ - ອຊນສ ກຳມະການ
14) ຫົວໜ້າ ກົມສິ່ງແວດລ້ອມ - ອຊນສ ກຳມະການ
15) ຫົວໜ້າ ກົມ ອຸຕຸນິຍົມ ແລະ ອຸທົກກະສາດ - ອຊນສ ກຳມະການ
16) ຫົວໜ້າ ກົມຊັບພະຍາກອນນ້ຳ ກຳມະການ

**6.2. ຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວ ແຕ່ງຕັ້ງຜູ້ຕາງໜ້າຂອງຕົນ ເຂົ້າຮ່ວມວຽກງານຂອງຄະນະກຳມະທິການແມ່ນ້ຳຂອງສາກົນໃນຂັ້ນຕ່າງໆ ດັ່ງຕໍ່ໄປນີ້:**

1) ສະມາຊິກ ສະພາມົນຕີ ຄມສ; ປະທານ ຄມຊ
2) ສະມາຊິກ ສຳຮອງສະພາມົນຕີ ຄມສ ລັດຖະມົນຕີຊ່ວຍວ່າການ ກະຊວງພະລັງງານ ແລະ ບໍ່ແຮ່; ຮອງປະທານ ຄມຊ
3) ສະມາຊິກ ຄະນະກຳມະການຮ່ວມ ຄມສ; ຫົວໜ້າຫ້ອງການ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ
4) ສະມາຊິກສຳຮອງຄະນະກຳມະການຮ່ວມ ຄມສ; ຫົວໜ້າກົມ ແລະ ຮອງຫົວໜ້າກົມຊັບພະຍາກອນນ້ຳ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ

## ໝວດທີ IV
## ໜ້າທີ່ ແລະ ຂອບເຂດສິດ ຂອງປະທານ ກິຕິມະສັກ, ປະທານ, ຮອງປະທານ, ຄະນະກຳມະການ, ກອງເລຂາ ແລະ ລະບອບແບບແຜນ ວິທີເຮັດວຽກ

**ມາດຕາ 7. ໜ້າທີ່ ແລະ ຂອບເຂດສິດ ຂອງປະທານ ກິຕິມະສັກ ຂອງ ຄມຊ**

ປະທານກິຕິມະສັກ ເປັນຜູ້ຊີ້ນຳຮອບດ້ານຕໍ່ວຽກງານຂອງ ຄມຊ ແລະ ຮັບຜິດຊອບໂດຍກົງ ຕໍ່ນາຍົກລັດຖະມົນຕີ.

**ມາດຕາ 8. ໜ້າທີ່ ແລະ ຂອບເຂດສິດ ຂອງປະທານ ຄມຊ**

ປະທານ ຄມຊ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້ :

8.1 ຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ຕ່າງໆ, ລາຍງານ ແລະ ຂໍທິດຊີ້ນຳຈາກປະທານກິຕິມະສັກ ຂອງ ຄມຊ;

8.2 ເປັນປະທານກອງປະຊຸມສະໄໝສາມັນ ແລະ ສະໄໝວິສາມັນ ຂອງ ຄມຊ;

8.3 ເຂົ້າຮ່ວມກອງປະຊຸມ, ພົບປະເຈລະຈາ ແລະ ເຊັນສັນຍາກັບຕ່າງປະເທດ ຕາມການມອບໝາຍຂອງລັດຖະບານ;

8.4 ເປັນປະທານສະພາມົນຕີ ຄມສ ຕາມຮອບວຽນ ແລະ ເປັນເຈົ້າພາບຈັດກອງປະຊຸມສະພາມົນຕີ ຄມສ ຕາມການຕົກລົງເຫັນດີຈາກລັດຖະບານ;

8.5 ຊີ້ນຳການຈັດຕັ້ງປະຕິບັດແຜນການ ແລະ ແຜນງົບປະມານ ຂອງ ຄມຊ ໃນແຕ່ລະໄລຍະ; ລາຍງານການເຄື່ອນໄຫວວຽກງານຂອງ ຄມຊ ຢ່າງເປັນປົກກະຕິຕໍ່ລັດຖະບານ ໂດຍຜ່ານປະທານກິຕິມະສັກ ຂອງ ຄມຊ;

8.6 ສະເໜີແຕ່ງຕັ້ງບຸກຄະລະກອນເພື່ອໄປປະຈຳການຢູ່ກອງເລຂາ ຄມສ;

8.7 ສະເໜີແຕ່ງຕັ້ງບຸກຄະລະກອນໄປຮ່ວມກອງປະຊຸມ ແລະ ເຄື່ອນໄຫວຢູ່ພາຍໃນ ແລະ ຕ່າງປະເທດໃນຂອບເຂດ ຂອງ ຄມສ ແລະ ຄມຊ;

8.8 ແຕ່ງຕັ້ງຄະນະຜູ້ຊ່ວຍວຽກ ແລະ ສ້າງຕັ້ງໜ່ວຍປະຕິບັດງານສະເພາະກິດຂຶ້ນ ຊຶ່ງປະກອບດ້ວຍບັນດາຜູ້ຕາງໜ້າຈາກຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສຶກສາຄົ້ນຄວ້າບັນຫາສະເພາະໃດໜຶ່ງ;

8.9 ແບ່ງຄວາມຮັບຜິດຊອບໃຫ້ຮອງປະທານ ຄມຊ ຕາມຄວາມເໝາະສົມ;

8.10 ຮຽກປະຊຸມສະໄໝສາມັນ ຢ່າງເປັນປົກກະຕິ ແລະ ສະໄໝວິສາມັນໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ;

8.11 ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍ ຂອງລັດຖະບານ ແລະ ປະທານກິຕິມະສັກ.

**ມາດຕາ 9. ໜ້າທີ່ ແລະ ຂອບເຂດສິດ ຂອງຮອງປະທານ ແລະ ກຳມະການ**

ຮອງປະທານ ຄມຊ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້ :

9.1 ຮອງປະທານ ເປັນຜູ້ຊ່ວຍປະທານ ແລະ ຮັບຜິດຊອບລົງເລິກວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ໃນກໍລະນີທີ່ປະທານບໍ່ຢູ່, ປະທານຈະມອບໃຫ້ຮອງປະທານທ່ານໃດທ່ານໜຶ່ງ ຢ່າງເປັນລາຍລັກອັກສອນເປັນຜູ້ຮັບຜິດຊອບແທນ;

9.2 ຮອງປະທານ ແລະ ຄະນະກຳມະການທຸກຄົນມີສິດ ແລະ ໜ້າທີ່ປະກອບຄຳຄິດຄຳເຫັນຕໍ່ບັນຫາຕ່າງໆ ລວມທັງແຜນການ, ແຜນງົບປະມານ ແລະ ສັງເກດຕີລາຄາການເຄື່ອນໄຫວວຽກງານຂອງ ຄມຊ;

9.3 ຮອງປະທານ ແລະ ກຳມະການມີໜ້າທີ່ລາຍງານມະຕິຕົກລົງ ຂອງກອງປະຊຸມ ຄມຊ ຕໍ່ຂັ້ນນຳຂອງຕົນຊາບ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ໄດ້ວາງໄວ້ ແລ້ວລາຍງານຄືນຕໍ່ ຄມຊ ກ່ຽວກັບຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;

9.4 ສະເໜີປະທານຮຽກປະຊຸມສະໄໝສາມັນຢ່າງເປັນປົກກະຕິ ແລະ ສະໄໝວິສາມັນໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ;

9.5 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງປະທານ ຄມຊ.

**ມາດຕາ 10. ໜ້າທີ່ ແລະ ຂອບເຂດສິດ ຂອງ ກອງເລຂາ ຄມຊ.**

ກອງເລຂາ ຄມຊ ເປັນເສນາທິການໃຫ້ແກ່ ຄມຊ ມີໜ້າທີ່ ແລະ ຂອບເຂດສິດຕ່າງໆດັ່ງນີ້ :

10.1 ຮ່າງແຜນການເຄື່ອນໄຫວວຽກງານ ແລະ ແຜນງົບປະມານປະຈຳປີ ຂອງ ຄມຊ;

10.2 ປະສານງານກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດໃນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວຂອງ ຄມຊ ໃນແຕ່ລະໄລຍະ ແລະ ສະຫຼຸບລາຍງານໃນການຈັດຕັ້ງປະຕິບັດວຽກງານຢ່າງເປັນປົກກະຕິ;

10.3 ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ສັນຍາ ວ່າດ້ວຍການຮ່ວມມື ເພື່ອພັດທະນາອ່າງແມ່ນ້ຳຂອງແບບຍືນຍົງ ປີ 1995, ຜັນຂະຫຍາຍລະບຽບການ ແລະ ບົດແນະນຳຕ່າງໆ ຂອງ ຄມສ ໃຫ້ກາຍມາເປັນລະບຽບການ ແລະ ບົດແນະນຳພາຍໃນ; ສັງລວມ, ວິໄຈ ແລະ ສະໜອງຂໍ້ມູນຂ່າວສານຕ່າງໆ ທີ່ພົວພັນກັບການຄຸ້ມຄອງຊັບພະຍາກອນນ້ຳໃຫ້ແກ່ສັງຄົມ;

10.4 ຕິດຕາມກວດກາ, ຊຸກຍູ້, ສົ່ງເສີມ ແລະ ລາຍງານການຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການຮ່ວມມືພັດທະນາອ່າງແມ່ນ້ຳຂອງແບບຍືນຍົງ ປີ 1995, ລະບຽບການ ແລະ ບົດແນະນຳ ຕ່າງໆ ຂອງ ຄມສ;

10.5 ຈັດກອງປະຊຸມສະໄໝສາມັນ ແລະ ສະໄໝວິສາມັນ; ເຊີນປະຊຸມ, ກະກຽມເນື້ອໃນຕາມວາລະຂອງກອງປະຊຸມ ແລະ ບົດບັນທຶກລາຍງານ;

10.6 ຕິດຕາມກວດກາ, ຊຸກຍູ້, ສົ່ງເສີມ ແລະ ລາຍງານການຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການຮ່ວມມືພັດທະນາອ່າງແມ່ນ້ຳຂອງແບບຍືນຍົງປີ 1995, ລະບຽບການ ແລະ ບົດແນະນຳຕ່າງໆ ຂອງ ຄມສ;

10.7 ປະສານສົມທົບ ກັບກອງເລຂາ ຄມສ ແລະ ກອງເລຂາ ຄມຊ ຂອງບັນດາປະເທດພາຄີ ແລະ ອົງການຈັດຕັ້ງຕ່າງໆ ໃນການຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການຮ່ວມມືເພື່ອພັດທະນາອ່າງແມ່ນ້ຳຂອງແບບຍືນຍົງ ປີ 1995, ແຜນຍຸດທະສາດ ແລະ ບັນດາແຜນງານຕ່າງໆ ຂອງ ຄມສ; ການເຂົ້າຮ່ວມກອງປະຊຸມລະດັບຕ່າງໆ ລວມທັງກອງປະຊຸມສະພາມົນຕີ ແລະ ຄະນະກຳມະການຮ່ວມ ໂດຍການກະກຽມເນື້ອໃນ ເພື່ອເຂົ້າຮ່ວມຢ່າງລະອຽດ ແລະ ຂໍທິດຊີ້ນຳ, ສະຫຼຸບສັງລວມ, ລາຍງານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;

10.8 ຄົ້ນຄວ້າ ແລະ ນຳສະເໜີວິທີການແກ້ໄຂຢ່າງເໝາະສົມຕໍ່ກັບຄຳຮ້ອງຟ້ອງ, ຄຳຮ້ອງທຸກ ຂອງປະຊາຊົນ ແລະ ພາກສ່ວນຕ່າງໆ ກ່ຽວກັບບັນຫາຂໍ້ຂັດແຍ່ງໃນການຄຸ້ມຄອງ ແລະ ນຳໃຊ້ ຊັບພະຍາກອນນ້ຳ ໃນຂອບເຂດອ່າງແມ່ນ້ຳ;

10.9 ພົວພັນ ແລະ ປະສານງານກັບກອງເລຂາ ຄມສ ໃນດານຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ບັນດາແຜນງານຕ່າງໆ ຂອງ ຄມສ;

10.10 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງປະທານ ຄມຊ.

**ມາດຕາ 11. ລະບອບແບບແຜນ ວິທີການເຮັດວຽກ**

ຄມຊ ເຄື່ອນໄຫວ ແລະ ດຳເນີນງານຕາມຫຼັກການດັ່ງນີ້:

11.1 ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ, ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງບັນດາສະມາຊິກ ຄມຊ;

11.2 ເຮັດວຽກມີແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບອົງການຈັດຕັ້ງທີ່ກ່ຽວຂ້ອງ;

11.3 ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້ ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ ຜົນເສຍພ້ອມທັງປະຕິບັດລະບອບລາຍງານ ສອງແສງຢ່າງເຂັ້ມງວດ;

11.4 ການດຳເນີນກອງປະຊຸມໃນແຕ່ລະຄັ້ງ ຕ້ອງປະກອບດ້ວຍສະມາຊິກ ຂອງ ຄມຊ ບໍ່ຕໍ່າກວ່າເຄິ່ງໜຶ່ງ ຈຶ່ງສາມາດເປີດກອງປະຊຸມໄດ້;

11.5 ທຸກໆກອງປະຊຸມ ຂອງ ຄມຊ ຕ້ອງມີການບັນທຶກ ແລະ ສະຫຼຸບສັງລວມຄົບຖ້ວນ ແລະ ເຮັດບົດລາຍງານສົ່ງໃຫ້ປະທານກິຕິມະສັກ ແລະ ກະຊວງການຕາງປະເທດ ພ້ອມທັງສຳເນົາໃຫ້ຄະນະເລຂາລັດຖະບານ ແລະ ຂະແໜງການທີ່ກ່ຽວຂ້ອງ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 12. ງົບປະມານ**

ຄມຊ ມີງົບປະມານເປັນຂອງຕົນເອງ ທີ່ໄດ້ມາຈາກງົບປະມານລັດທີ່ນອນຢູ່ໃນຫົວໜ່ວຍການເງິນດຽວກັນກັບອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ.

**ມາດຕາ 13. ກາປະທັບ ແລະ ເຄື່ອງໝາຍ**

13.1 ຄມຊ ມີກາປະທັບ ແລະ ເຄື່ອງໝາຍຂອງຕົນເອງເພື່ອຮັບໃຊ້ວຽກງານທາງລັດຖະການ;

13.2 ກອງເລຂາ ຄມຊ ມີກາປະທັບຂອງຕົນເອງເພື່ອຮັບໃຊ້ວຽກງານທາງລັດຖະການ;

**ມາດຕາ 14. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງ ແລະ ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 15. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ 197/ນຍ ລົງວັນທີ 15 ພະຈິກ 1999.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ